ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 535 /ລບ

ນະຄອນຫຼວງວຽງຈັນ, ວັນທີ 18 / 08 / 25

# ດຳລັດ
# ວ່າດ້ວຍມູນນິທິ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 309/ຄຈສພ, ລົງວັນທີ 16 ກໍລະກົດ 2025.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງ ມູນນິທິ ເພື່ອອຳນວຍຄວາມສະດວກ ແລະ ຊຸກຍູ້ສົ່ງເສີມການເຄື່ອນໄຫວຂອງມູນນິທິ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ສົ່ງເສີມສິດເສລີພາບ, ຫົວຄິດປະດິດສ້າງ ແລະ ສິດເປັນເຈົ້າຂອງພົນລະເມືອງລາວ ປະກອບສ່ວນເຂົ້າໃນການຊ່ວຍເຫຼືອສັງຄົມ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນ.

**ມາດຕາ 2 ມູນນິທິ**

ມູນນິທິ ແມ່ນ ການຈັດຕັ້ງສັງຄົມ ທີ່ມີຖານະນິຕິບຸກຄົນ, ມີທຶນ, ຊັບສິນສະເພາະ ເພື່ອສາທາລະນະປະໂຫຍດ ດ້ານ ວັດທະນະທຳ, ການສຶກສາ, ສິ່ງແວດລ້ອມ, ສາທາລະນະສຸກ, ກິລາ-ກາຍຍະກຳ, ວິທະຍາສາດ, ການກຸສົນ, ມະນຸດສະທຳ ແລະ ອື່ນໆ ໂດຍບໍ່ຫວັງຜົນກຳໄລ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບໍ່ຫວັງຜົນກຳໄລ** ໝາຍເຖິງ ທຶນ, ຊັບສິນ, ລາຍຮັບ ທີ່ໄດ້ມາຈາກການເຄື່ອນໄຫວຂອງມູນນິທິ ພາຍຫຼັງຫັກຄ່າໃຊ້ຈ່າຍບໍລິຫານອອກແລ້ວ ສ່ວນທີ່ເຫຼືອບໍ່ໄດ້ນຳມາແບ່ງປັນກັນ, ບໍ່ສວຍໃຊ້ເພື່ອຜົນປະໂຫຍດສ່ວນຕົວ ແຕ່ນຳໃຊ້ຕາມຈຸດປະສົງທີ່ໄດ້ກຳນົດໃນກົດລະບຽບຂອງມູນນິທິ;
2. **ທຶນ** ໝາຍເຖິງ ເງິນ ແລະ ຊັບສິນ;

3. **ຊັບສິນຂອງມູນນິທິ** ໝາຍເຖິງ ທີ່ດິນ, ຕຶກ, ອາຄານ, ພາຫະນະ, ອຸປະກອນຮັບໃຊ້ຫ້ອງການ ແລະ ຊັບສິນອື່ນ ຊຶ່ງໄດ້ມາຈາກ ການຊື້, ການປະກອບສ່ວນ, ການບໍລິຈາກ, ການຊ່ວຍເຫຼືອລ້າ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຫຼື ລັດມອບໃຫ້;

4. **ການບໍລິຈາກທຶນ** ໝາຍເຖິງ ການເສຍສະຫຼະ, ການມອບໂອນທຶນຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໃຫ້ແກ່ມູນນິທິ;

5. **ອົງການຈັດຕັ້ງສາກົນ** ໝາຍເຖິງ ອົງການຈັດຕັ້ງສາກົນທີ່ເປັນເຄືອຂ່າຍຂອງອົງການສະຫະປະຊາຊາດ, ອົງການຈັດຕັ້ງສາກົນລະຫວ່າງລັດຖະບານ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (INGOs);

6. **ການລະດົມທຶນ** ໝາຍເຖິງ ການຈັດ ເວທີ, ກອງປະຊຸມ, ງານ ຫຼື ການເຄື່ອນໄຫວກິດຈະກໍາອື່ນ ເພື່ອໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ບໍລິຈາກ, ສະໜັບສະໜູນທຶນ ແກ່ມູນນິທິ;

7. **ໃບທະບຽນມູນນິທິ** ໝາຍເຖິງ ເອກະສານຢັ້ງຢືນ, ຮັບຮອງຖານະນິຕິບຸກຄົນ ແລະ ການເຄື່ອນໄຫວຂອງມູນນິທິ ທີ່ຄະນະຈັດຕັ້ງສູນກາງພັກ ອອກໃຫ້.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານມູນນິທິ**

ລັດ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສ້າງຕັ້ງມູນນິທິ ແລະ ເຄື່ອນໄຫວ ຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ.

ລັດ ສົ່ງເສີມ ໃຫ້ມູນນິທິ ພົວພັນ ຮ່ວມມືກັບ ອົງການຈັດຕັ້ງສາກົນ ໃນການຂົນຂວາຍ ແລະ ຮັບເອົາການບໍລິຈາກທຶນ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ກົດລະບຽບຂອງມູນນິທິ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານມູນນິທິ**

ການເຄື່ອນໄຫວວຽກງານມູນນິທິ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດຂອງຂະແໜງການ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ;
2. ຄຸ້ມຄອງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຖືກຕ້ອງຕາມ ຈຸດປະສົງ, ເປົ້າໝາຍ ແລະ ຂອບເຂດ ທີ່ໄດ້ຮັບການອະນຸຍາດ;
4. ຮັບປະກັນຄວາມ ສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ຍຸຕິທໍາ, ເປີດເຜີຍ ແລະ ສາມາດກວດສອບໄດ້;
5. ຕື່ນຕົວສະໝັກໃຈປະກອບທຶນ ເພື່ອສ້າງຕັ້ງມູນນິທິ;
6. ເຄື່ອນໄຫວກຸ້ມຕົນເອງທາງດ້ານການເງິນ ແລະ ບໍ່ຫວັງຜົນກໍາໄລ.

**ມາດຕາ 6 ຂອບເຂດການນໍາໃຊ້**

ດໍາລັດສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານມູນນິທິ ຢູ່ ສປປ ລາວ.

## ໝວດທີ 2
## ການສ້າງຕັ້ງມູນນິທິ

**ມາດຕາ 7 ເງື່ອນໄຂການສ້າງຕັ້ງມູນນິທິ**

ການສ້າງຕັ້ງມູນນິທິ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີ ຊື່ ແລະ ຈຸດປະສົງ ຂອງມູນນິທິ;

2. ມີຂອບເຂດ, ຂະແໜງການ ການເຄື່ອນໄຫວ ຢ່າງຈະແຈ້ງ;

3. ຜູ້ລິເລີ່ມສ້າງຕັ້ງມູນນິທິ ຕ້ອງເປັນພົນລະເມືອງລາວ, ມີອາຍຸແຕ່ ຊາວຫ້າປີ ຂຶ້ນໄປ, ມີປະຫວັດຈະແຈ້ງ, ມີສຸຂະພາບແຂງແຮງ, ບໍ່ເປັນຄົນບ້າເສຍຈິດ, ມີຄວາມເສຍສະຫຼະເພື່ອຜົນປະໂຫຍດສ່ວນລວມ, ມີຄວາມເຄົາລົບເຊິ່ງກັນ ແລະ ກັນ, ມີຄວາມຊື່ສັດບໍລິສຸດ, ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບຍ້ອນການກະທຳຜິດໂດຍເຈດຕະນາ.

4. ມີ ທຶນ ຈົດທະບຽນ ແລະ ມີເງິນເຄື່ອນໄຫວ ໃດໜຶ່ງ ດັ່ງນີ້:

4.1. ທຶນ ຈົດທະບຽນ ສາມຮ້ອຍລ້ານກີບ ຂຶ້ນໄປ ແລະ ເງິນເຄື່ອນໄຫວ ຢ່າງໜ້ອຍ ສີ່ຮ້ອຍລ້ານກີບ ຂຶ້ນໄປ ສຳລັບມູນນິທິ ທີ່ເຄື່ອນໄຫວໃນຂອບເຂດ ທົ່ວປະເທດ;

4.2. ທຶນ ຈົດທະບຽນ ສອງຮ້ອຍລ້ານກີບ ຂຶ້ນໄປ ແລະ ເງິນເຄື່ອນໄຫວ ຢ່າງໜ້ອຍ ສາມຮ້ອຍລ້ານກີບ ຂຶ້ນໄປ ສຳລັບມູນນິທິ ທີ່ເຄື່ອນໄຫວໃນຂອບເຂດ ນະຄອນຫຼວງ, ແຂວງ;

4.3 ທຶນ ຈົດທະບຽນ ໜຶ່ງຮ້ອຍລ້ານກີບ ຂຶ້ນໄປ ແລະ ເງິນເຄື່ອນໄຫວ ຢ່າງໜ້ອຍ ສອງຮ້ອຍລ້ານກີບ ຂຶ້ນໄປ ສຳລັບມູນນິທິ ທີ່ເຄື່ອນໄຫວໃນຂອບເຂດ ເມືອງ, ນະຄອນ

5. ມີສຳນັກງານທີ່ຕັ້ງຢູ່ ສປປ ລາວ ໂດຍມີການຢັ້ງຢືນຈາກຄະນະກຳມະການປົກຄອງບ້ານ ບ່ອນທີ່ສຳນັກງານມູນນິທິຕັ້ງຢູ່, ມີໜັງສືຢັ້ງຢືນກຳມະສິດ ຫຼື ສັນຍາເຊົ່າທີ່ຖືກຕ້ອງຕາມກົດໝາຍ;

6. ມີກົດລະບຽບ ພາຍໃນມູນນິທິ.

**ມາດຕາ 8 ການກຳນົດ ຊື່ ແລະ ຈຸດປະສົງ ຂອງມູນນິທິ**

ຊື່ຂອງມູນນິທິ ຕ້ອງບໍ່ໃສ່ຄຳວ່າ ແຫ່ງຊາດ ຫຼື ແຫ່ງ ສປປ ລາວ, ບໍ່ຊໍ້າຊ້ອນກັບຊື່ມູນນິທິ ທີ່ໄດ້ຮັບອະນຸມັດສ້າງຕັ້ງຂຶ້ນກ່ອນ, ກຳນົດເປັນພາສາລາວ, ຈະແຈ້ງ, ເຂົ້າໃຈງ່າຍ, ບໍ່ມີລັກສະນະຫຍາບຄາຍ, ຖ້າແປເປັນພາສາຕ່າງປະເທດ ຕ້ອງໃຫ້ມີຄວາມໝາຍສອດຄ່ອງກັບຊື່ ທີ່ເປັນພາສາລາວ; ກໍລະນີນຳໃຊ້ຊື່ ຂອງບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ເປັນຊື່ ຫຼື ປະກອບ ໃນຊື່ຂອງມູນນິທິ ຕ້ອງໄດ້ຮັບອະນຸຍາດເປັນລາຍລັກອັກສອນຈາກ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ນັ້ນເສຍກ່ອນ.

ຈຸດປະສົງຂອງມູນນິທິ ຕ້ອງຈະແຈ້ງ ໂດຍບໍ່ຂັດກັບ ລັດຖະທຳມະນູນ, ກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ບັນດາເຜົ່າ, ບໍ່ເປັນໄພອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິດເສລີພາບຂອງບຸກຄົນອື່ນ.

**ມາດຕາ 9 ການກຳນົດຂອບເຂດການເຄື່ອນໄຫວຂອງມູນນິທິ**

ມູນນິທິ ມີຂອບເຂດການເຄື່ອນໄຫວ ດັ່ງນີ້:

ມູນນິທິທີ່ເຄື່ອນໄຫວໃນຂອບເຂດ ທົ່ວປະເທດ ຊຶ່ງແມ່ນ ມູນນິທິ ທີ່ໄດ້ຮັບອະນຸມັດສ້າງຕັ້ງ ແລະ ເຄື່ອນໄຫວໃນຂອບເຂດທົ່ວປະເທດ, ພາກໃດໜຶ່ງ ຫຼື ກວມເອົາສອງແຂວງຂຶ້ນໄປ.

ມູນນິທິທີ່ເຄື່ອນໄຫວໃນຂອບເຂດ ນະຄອນຫຼວງ, ແຂວງ ຊຶ່ງແມ່ນ ມູນນິທິ ທີ່ໄດ້ຮັບອະນຸມັດສ້າງຕັ້ງ ແລະ ເຄື່ອນໄຫວພາຍໃນ ນະຄອນຫຼວງ, ແຂວງ.

ມູນນິທິທີ່ເຄື່ອນໄຫວໃນຂອບເຂດ ເມືອງ, ນະຄອນ ຊຶ່ງແມ່ນ ມູນນິທິ ທີ່ໄດ້ຮັບອະນຸມັດສ້າງຕັ້ງ ແລະ ເຄື່ອນໄຫວພາຍໃນ ເມືອງ, ນະຄອນ.

**ມາດຕາ 10 ການສະເໜີສ້າງຕັ້ງມູນນິທິ**

ຜູ້ລິເລີ່ມສ້າງຕັ້ງມູນນິທິ ຕ້ອງຍື່ນໜັງສືສະເໜີ ແລະ ເອກະສານທີ່ກ່ຽວຂ້ອງ ຕໍ່ຄະນະຈັດຕັ້ງສູນກາງພັກ ດັ່ງນີ້:

1. ໜັງສືສະເໜີຂໍສ້າງຕັ້ງມູນນິທິ ຕາມແບບພິມຂອງຄະນະຈັດຕັ້ງສູນກາງພັກ;
2. ຮ່າງກົດລະບຽບຂອງມູນນິທິ ຕາມແບບພິມຂອງຄະນະຈັດຕັ້ງສູນກາງພັກ;
3. ບົດສະເໜີເຫດຜົນ ແລະ ຄວາມຈໍາເປັນໃນການສ້າງຕັ້ງມູນນິທິ ຕາມແບບພິມຂອງຄະນະຈັດຕັ້ງສູນກາງພັກ;
4. ໜັງສືຢັ້ງຢືນການປະກອບສ່ວນ ທຶນ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພ້ອມທັງລາຍຊື່ເຈົ້າຂອງທຶນ.
5. ຊີວະປະຫວັດຕາມແບບພິມຂອງຄະນະຈັດຕັ້ງສູນກາງພັກ;
6. ໃບຢັ້ງຢືນທີ່ຢູ່;
7. ບັດປະຈໍາຕົວ;
8. ສໍາມະໂນຄົວ;
9. ໃບແຈ້ງໂທດ;
10. ໃບຢັ້ງຢືນຖານະການເງິນ;
11. ໃບຢັ້ງຢືນທີ່ຕັ້ງສໍານັກງານຂອງມູນນິທິ ທີ່ໄດ້ຮັບການຢັ້ງຢືນຈາກຄະນະກໍາມະການປົກຄອງຕາແສງ;
12. ແຜນວາດທີ່ຕັ້ງສໍານັກງານຂອງມູນນິທິ;
13. ເອກະສານອື່ນທີ່ເຫັນວ່າມີຄວາມຈໍາເປັນ.

ສໍາລັບການສ້າງຕັ້ງມູນນິທິ ຕາມພິໄນກໍາ ນອກຈາກປະກອບມີເອກະສານຂ້າງເທິງແລ້ວ ຍັງຕ້ອງສໍາເນົາເອກະສານຢັ້ງຢືນການເສຍຊີວິດ ແລະ ພິໄນກໍາ.

**ມາດຕາ 11 ການພິຈາລະນາອະນຸຍາດສ້າງຕັ້ງມູນນິທິ**

ພາຍຫຼັງໄດ້ຮັບໜັງສືສະເໜີ ແລະ ເອກະສານທີ່ກ່ຽວຂ້ອງ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ແລ້ວ ຄະນະຈັດຕັ້ງສູນກາງພັກ ຕ້ອງສະເໜີຫາກະຊວງປ້ອງກັນຄວາມສະຫງົບ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ພາຍໃນເວລາ ຫ້າ ວັນລັດຖະການ.

ກະຊວງປ້ອງກັນຄວາມສະຫງົບ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຕ້ອງຄົ້ນຄວ້າພິຈາລະນາ ມີຄໍາເຫັນແຈ້ງຕອບມາຍັງ ຄະນະຈັດຕັ້ງສູນກາງພັກ ພາຍໃນເວລາ ສີ່ສິບຫ້າວັນ ນັບແຕ່ວັນໄດ້ຮັບໜັງສືສະເໜີເປັນຕົ້ນໄປ.

ຄະນະຈັດຕັ້ງສູນກາງພັກ ພິຈາລະນາອະນຸຍາດການສ້າງຕັ້ງມູນນິທິ ພາຍໃນກໍານົດ ສິບຫ້າ ວັນ ນັບແຕ່ວັນໄດ້ຮັບຄໍາເຫັນຈາກ ກະຊວງປ້ອງກັນຄວາມສະຫງົບ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເປັນຕົ້ນໄປ.

ໃນກໍລະນີ ປະຕິເສດການສ້າງຕັ້ງມູນນິທິ ຕ້ອງແຈ້ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ໃຫ້ຜູ້ສະເໜີ ພາຍໃນເວລາ ຫ້າ ວັນລັດຖະການ.

**ມາດຕາ 12 ການຈົດທະບຽນມູນນິທິ**

ພາຍຫຼັງມູນນິທິໄດ້ຮັບການອະນຸຍາດສ້າງຕັ້ງ ຄະນະບໍລິຫານຕ້ອງສະເໜີຈົດທະບຽນມູນນິທິນໍາຄະນະຈັດຕັ້ງສູນກາງພັກ ພ້ອມດ້ວຍປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີຂໍຈົດທະບຽນ ຕາມແບບພິມຂອງຄະນະຈັດຕັ້ງສູນກາງພັກ;
2. ເອກະສານອະນຸຍາດສ້າງຕັ້ງ;
3. ເອກະສານຮັບຮອງກົດລະບຽບ;
4. ເອກະສານຮັບຮອງຄະນະບໍລິຫານ;
5. ສຳເນົາບັນຊີເງິນຝາກຂອງມູນນິທິ;
6. ເອກະສານຢັ້ງຢືນການໂອນທຶນໃຫ້ມູນນິທິ.

ຄະນະຈັດຕັ້ງສູນກາງພັກ ຕ້ອງພິຈາລະນາອອກໃບທະບຽນມູນນິທິ ພາຍໃນເວລາ ຫ້າ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ປະກອບຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

ມູນນິທິ ສາມາດເຄື່ອນໄຫວໄດ້ ນັບແຕ່ວັນທີ່ໄດ້ຮັບການຈົດທະບຽນເປັນຕົ້ນໄປ.

ໃບທະບຽນມູນນິທິ ມີອາຍຸການນຳໃຊ້ ສາມ ປີ ແລະ ສາມາດຕໍ່ໄດ້.

**ມາດຕາ 13 ຕາປະທັບ ແລະ ສັນຍາລັກ ຂອງມູນນິທິ**

ມູນນິທິ ທີ່ໄດ້ຮັບການອະນຸຍາດສ້າງຕັ້ງຢ່າງຖືກຕ້ອງຕາມດຳລັດສະບັບນີ້ ມີຕາປະທັບເປັນຂອງຕົນ ເພື່ອນຳໃຊ້ໃນການເຄື່ອນໄຫວວຽກງານມູນນິທິ ໂດຍໄດ້ຮັບອະນຸຍາດຈາກກະຊວງປ້ອງກັນຄວາມສະຫງົບ.

ສຳລັບ ຮູບແບບ, ຂະໜາດ, ເນື້ອໃນ ແລະ ສີນ້ຳໝຶກຕາປະທັບ ມູນນິທິ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລະບຽບການກ່ຽວກັບຕາປະທັບ.

ມູນນິທິ ມີກາໝາຍສັນຍາລັກສະເພາະຂອງຕົນ ໂດຍໄດ້ຮັບອະນຸຍາດຈາກ ຄະນະຈັດຕັ້ງສູນກາງພັກ.

**ມາດຕາ 14 ການຕໍ່ທະບຽນມູນນິທິ**

ມູນນິທິ ຕ້ອງສະເໜີຕໍ່ທະບຽນມູນນິທິ ນຳຄະນະຈັດຕັ້ງສູນກາງພັກ ກ່ອນໃບທະບຽນມູນນິທິ ຈະໝົດອາຍຸການນຳໃຊ້ ຫົກສິບ ວັນ ໂດຍປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີ ຂໍຕໍ່ທະບຽນ;
2. ບົດລາຍງານການເຄື່ອນໄຫວປະຈຳ ສາມ ປີ ຂອງມູນນິທິ;
3. ສຳເນົາໃບທະບຽນມູນນິທິ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ, ສິດ, ໜ້າທີ່ ແລະ ພັນທະ ຂອງມູນນິທິ

**ມາດຕາ 15 ໂຄງປະກອບການຈັດຕັ້ງຂອງມູນນິທິ**

ມູນນິທິ ຕ້ອງມີໂຄງປະກອບ ກົງຈັກ ແລະ ບຸກຄະລາກອນ ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງມູນນິທິ ລາຍລະອຽດໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງມູນນິທິ**

ມູນນິທິ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຄື່ອນໄຫວໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ແຜນຍຸດທະສາດຂອງຂະແໜງການ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ລະບຽບການ;

2. ໂຄສະນາເຜີຍແຜ່ໃຫ້ກວ້າງຂວາງ, ທົ່ວເຖິງໃນສັງຄົມ ກ່ຽວກັບຈຸດປະສົງຂອງຕົນ;

3. ລະດົມ, ຂໍຂອາຍ, ຮັບເອົາການສະໜັບສະໜູນ, ຊ່ວຍເຫຼືອ ແລະ ການບໍລິຈາກທຶນ ຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;

4. ໃຫ້ການສະໜັບສະໜູນ ເພື່ອສາທາລະນະປະໂຫຍດ ດ້ານວັດທະນະທຳ, ການສຶກສາ, ສິ່ງແວດລ້ອມ, ສາທາລະນະສຸກ, ກິລາ-ກາຍຍະກຳ, ວິທະຍາສາດ, ການກຸສົນ, ມະນຸດສະທຳ ຫຼື ສາທາລະນະປະໂຫຍດອື່ນ ຕາມກົດລະບຽບຂອງມູນນິທິ;

5. ຂຶ້ນບັນຊີການຮັບບໍລິຈາກທຶນ ຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

6. ກວດລາຍຊື່ຜູ້ໃຫ້ທຶນຕາມບັນຊີຄວບຄຸມຂອງສາກົນ ຕາມການກຳນົດຂອງອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງ;

7. ເກັບຮັກສາຂໍ້ມູນກ່ຽວກັບການໃຫ້ທຶນ, ຜູ້ຮັບຜົນປະໂຫຍດຈາກການນຳໃຊ້ທຶນ ແລະ ເອກະສານທີ່ກ່ຽວຂ້ອງ;

8. ປະສານກັບ ກະຊວງ, ອົງການ, ພະແນກ, ອົງການທຽບເທົ່າພະແນກຂອງ ນະຄອນຫຼວງ, ແຂວງ, ຫ້ອງການ, ອົງການທຽບເທົ່າຫ້ອງການຂອງ ເມືອງ, ນະຄອນ ທີ່ພົວພັນກັບຂອບເຂດ ແລະ ຂະແໜງການເຄື່ອນໄຫວຂອງຕົນ;

9. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການຕົກລົງຂອງອົງການຄຸ້ມຄອງມູນນິທິ, ກະຊວງການຕ່າງປະເທດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 17 ພັນທະຂອງມູນນິທິ**

ມູນນິທິ ມີພັນທະ ດັ່ງນີ້:

1. ແຕ່ງຕັ້ງຄະນະບໍລິຫານ ແລະ ຄະນະກວດກາ ເມື່ອຄົບວາລະຕາມກົດລະບຽບຂອງມູນນິທິ;

2. ລາຍງານການລະດົມທຶນ ຫຼື ຮັບເອົາການ ບໍລິຈາກ, ການຊ່ວຍເຫຼືອ ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຕໍ່ຄະນະຈັດຕັ້ງສູນກາງພັກ ແລະ ພາກສ່ວນທີ່ກ່ຽວຂ້ອງ;

3. ລາຍງານ ແລະ ສະໜອງຂໍ້ມູນທີ່ຕິດພັນກັບວຽກງານດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ຄະນະຈັດຕັ້ງສູນກາງພັກ, ສຳນັກງານຂໍ້ມູນດ້ານການຟອກເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ;

4. ນຳໃຊ້ ທຶນ ທັງໝົດທີ່ມູນນິທິລະດົມມາໄດ້ ໃຫ້ຖືກຕ້ອງຕາມຈຸດປະສົງ, ເປົ້າໝາຍ ຂອງມູນນິທິ ຫຼື ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ໄດ້ມອບສັນທະໃຫ້ ຫຼື ຕາມພິໄນກຳ;

5. ປະຕິບັດ ຕາມກົດໝາຍ ແລະ ລະບຽບການກ່ຽວກັບ ການບັນຊີ, ການກວດສອບ ແລະ ກົດລະບຽບຂອງມູນນິທິ;

6. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານປະຈຳປີຂອງມູນນິທິ ຕໍ່ຄະນະຈັດຕັ້ງສູນກາງພັກ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ອນວັນທີ 31 ທັນວາຂອງທຸກປີ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ການໂຮມ, ການແຍກ, ການຍົກລະດັບ, ການປ່ຽນຊື່ ແລະ ການຍຸບເລີກ ມູນນິທິ

**ມາດຕາ 18 ການໂຮມມູນນິທິ**

ມູນນິທິ ທີ່ມີຈຸດປະສົງໂຮມເອົາຫຼາຍມູນນິທິເປັນມູນນິທິດຽວ ຕ້ອງໄດ້ຮັບການເຫັນດີຈາກ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ພາກສ່ວນທີ່ກ່ຽວຂ້ອງ ໂດຍສະເໜີຫາຄະນະຈັດຕັ້ງສູນກາງພັກ ເພື່ອພິຈາລະນາການອະນຸຍາດ ແລະ ອອກໃບທະບຽນ.

**ມາດຕາ 19 ການແຍກມູນນິທິ**

ມູນນິທິ ທີ່ມີຈຸດປະສົງແຍກອອກເປັນ ສອງ ຫຼື ຫຼາຍມູນນິທິ ຕ້ອງໄດ້ຮັບການເຫັນດີຈາກ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ພາກສ່ວນທີ່ກ່ຽວຂ້ອງ ໂດຍສະເໜີຫາຄະນະຈັດຕັ້ງສູນກາງພັກ ເພື່ອພິຈາລະນາການອະນຸຍາດ ແລະ ອອກໃບທະບຽນ.

**ມາດຕາ 20 ການຍົກລະດັບຂອບເຂດການເຄື່ອນໄຫວຂອງມູນນິທິ**

ມູນນິທິ ທີ່ເຄື່ອນໄຫວໃນຂອບເຂດ ເມືອງ, ນະຄອນ ສາມາດຍົກລະດັບຂອບເຂດການເຄື່ອນໄຫວ ເປັນມູນນິທິທີ່ເຄື່ອນໄຫວໃນຂອບເຂດ ນະຄອນຫຼວງ, ແຂວງ ຫຼື ເຄື່ອນໄຫວໃນຂອບເຂດທົ່ວປະເທດ. ມູນນິທິ ທີ່ເຄື່ອນໄຫວໃນຂອບເຂດ ນະຄອນຫຼວງ, ແຂວງ ສາມາດຍົກລະດັບຂອບເຂດການເຄື່ອນໄຫວ ເປັນມູນນິທິ ທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ.

ການຍົກລະດັບຂອບເຂດການເຄື່ອນໄຫວຂອງມູນນິທິ ຕ້ອງໄດ້ຮັບການເຫັນດີຈາກ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ພາກສ່ວນທີ່ກ່ຽວຂ້ອງ ໂດຍສະເໜີຫາຄະນະຈັດຕັ້ງສູນກາງພັກ ເພື່ອພິຈາລະນາການອະນຸຍາດ ແລະ ອອກໃບທະບຽນ.

**ມາດຕາ 21 ການປ່ຽນຊື່ມູນນິທິ**

ມູນນິທິ ສາມາດປ່ຽນຊື່ໄດ້ ຕ້ອງໄດ້ຮັບການເຫັນດີຕາມມະຕິກອງປະຊຸມຄະນະບໍລິຫານມູນນິທິ ແລະ ໄດ້ຮັບການອະນຸຍາດຈາກຄະນະຈັດຕັ້ງສູນກາງພັກ.

**ມາດຕາ 22 ການຍຸບເລີກມູນນິທິ**

ມູນນິທິຈະຖືກຍຸບເລີກໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມຄວາມສະໝັກໃຈ;
2. ໝົດກໍານົດເວລາການເຄື່ອນໄຫວຕາມທີ່ກໍານົດໄວ້ຢູ່ໃນກົດລະບຽບຂອງມູນນິທິ;
3. ມູນນິທິ ໄດ້ບັນລຸຈຸດປະສົງທີ່ໄດ້ກໍານົດໄວ້ຢູ່ໃນກົດລະບຽບຂອງຕົນແລ້ວ;
4. ບໍ່ມີທຶນ ຫຼື ຊັບສິນ ເພື່ອເຄື່ອນໄຫວຕໍ່ໄປ;
5. ບໍ່ມີການເຄື່ອນໄຫວເປັນປະຈໍາ ສິບສອງເດືອນ ຕິດຕໍ່ກັນ ແລະ ບໍ່ມີການລາຍງານ ກ່ຽວກັບ ສະພາບການຈັດຕັ້ງ, ການເຄື່ອນໄຫວ ແລະ ການເງິນຂອງຕົນ ໃຫ້ອົງການຈັດຕັ້ງລັດທີ່ກ່ຽວຂ້ອງຊາບ ເປັນເວລາຢ່າງໜ້ອຍ ສອງ ປີ ຕິດຕໍ່ກັນ;
6. ມີຄໍາຕັດສິນຂອງສານໃຫ້ຍຸບເລີກ;

7. ມີການລະເມີດ ກົດໝາຍ, ລະບຽບການ ຫຼື ກົດລະບຽບຂອງມູນນິທິ ຢ່າງຮ້າຍແຮງ.

ພາຍຫຼັງຍຸບເລີກມູນນິທິແລ້ວ ຄະນະຈັດຕັ້ງສູນກາງພັກ ຕ້ອງລຶບຊື່ມູນນິທິອອກຈາກບັນຊີມູນນິທິ ແລະ ແຈ້ງເປັນລາຍລັກອັກສອນໃຫ້ແກ່ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຊາບ.

ຊັບສິນຂອງມູນນິທິພາຍຫຼັງຍຸບເລີກ ຕ້ອງມີການຊໍາລະສະສາງ ໜີ້ສິນ, ລາຍຈ່າຍ ໃຫ້ຄົບຖ້ວນຕາມກົດໝາຍ. ຖ້າຫາກຊັບສິນຍັງເຫຼືອ ໃຫ້ປະຕິບັດຕາມກົດລະບຽບຂອງມູນນິທິ, ໂອນໃຫ້ມູນນິທິອື່ນ ຫຼື ລັດຮັບເອົາເພື່ອຈັດສັນໃຫ້ ມູນນິທິ ອື່ນ.

## ໝວດທີ 5
## ການເງິນ ແລະ ຊັບສິນ ຂອງມູນນິທິ

### ມາດຕາ 23 ແຫຼ່ງລາຍຮັບຂອງມູນນິທິ

ແຫຼ່ງລາຍຮັບຂອງມູນນິທິ ໄດ້ມາຈາກ:

1. ທຶນຈົດທະບຽນ;
2. ເງິນບໍລິຈາກຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ການຊ່ວຍເຫຼືອຂອງບຸກຄົນ ຫຼື ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ;
4. ລາຍໄດ້ຈາກການສະໜອງການບໍລິການ ຫຼື ການເຄື່ອນໄຫວອື່ນ ທີ່ຖືກຕ້ອງຕາມກົດໝາຍ;
5. ແຫຼ່ງລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ສໍາລັບການຮັບທຶນບໍລິຈາກ ຫຼື ການຊ່ວຍເຫຼືອ ຈາກ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ພາຍໃນ ແລະ ຕ່າງປະເທດ ຈະໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 24 ການເປີດບັນຊີ

ມູນນິທິ ຕ້ອງມີລະບົບບັນຊີທີ່ຖືກຕ້ອງຕາມກົດໝາຍການບັນຊີ ແລະ ເປີດບັນຊີເງິນຝາກ ຢູ່ທະນາຄານຂອງລັດ ຫຼື ທະນາຄານທຸລະກິດໃດໜຶ່ງຢູ່ ສປປ ລາວ.

### ມາດຕາ 25 ການຂຶ້ນທະບຽນຍານພາຫະນະຂອງມູນນິທິ

ຍານພາຫະນະ ທີ່ຢູ່ໃນການຄຸ້ມຄອງ ແລະ ນໍາໃຊ້ຂອງມູນນິທິ ທີ່ນໍາເຂົ້າມາ ຫຼື ໄດ້ຮັບຈາກການ ຊື້-ຂາຍຢູ່ພາຍໃນຢ່າງຖືກຕ້ອງຕາມກົດໝາຍ ຕ້ອງຂຶ້ນທະບຽນຍານພາຫະນະນໍາຂະແໜງການໂຍທາທິການ ແລະ ຂົນສົ່ງຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 26 ການຄຸ້ມຄອງ ແລະ ການນໍາໃຊ້ແຫຼ່ງລາຍຮັບຂອງມູນນິທິ

ການຄຸ້ມຄອງ ແລະ ການນໍາໃຊ້ແຫຼ່ງລາຍຮັບ ຂອງມູນນິທິ ຕ້ອງປະຕິບັດຕາມ ກົດໝາຍ, ລະບຽບການ ແລະ ກົດລະບຽບຂອງມູນນິທິ ແຕ່ລາຍຈ່າຍບໍລິຫານ ບໍ່ໃຫ້ເກີນ ສາມສິບສ່ວນຮ້ອຍ ຂອງລາຍຮັບທັງໝົດ.

ການປ່ຽນແປງ, ການມອບ ຫຼື ການໂອນ ຊັບສິນຂອງມູນນິທິ ໃຫ້ປະຕິບັດຕາມ ກົດໝາຍ, ລະບຽບການ ແລະ ກົດລະບຽບຂອງມູນນິທິ ບົນພື້ນຖານການເຫັນດີຈາກຄະນະຈັດຕັ້ງສູນກາງພັກ.

# ໝວດທີ 6
# ຂໍ້ຫ້າມ

**ມາດຕາ 27 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຂັດຂວາງການປະຕິບັດ ສິດ ແລະ ໜ້າທີ່ ຂອງມູນນິທິ;
2. ແອບອ້າງຊື່ ຫຼື ນຳໃຊ້ຊື່ ຂອງມູນນິທິ ໃນທາງທີ່ບໍ່ຖືກຕ້ອງ;
3. ສວຍໃຊ້ ຫຼື ແຊກແຊງການຈັດຕັ້ງພາຍໃນມູນນິທິ;
4. ສ້າງຕັ້ງ ແລະ ເຄື່ອນໄຫວ ເປັນມູນນິທິໂດຍບໍ່ໄດ້ຮັບອະນຸຍາດ;
5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 28 ຂໍ້ຫ້າມສຳລັບມູນນິທິ.**

ຫ້າມ ມູນນິທິ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດເສລີພາບໃນການສ້າງຕັ້ງມູນນິທິ ຫຼື ໃນນາມມູນນິທິ ເພື່ອເຄື່ອນໄຫວຂັດກັບກົດໝາຍ ແລະ ລະບຽບການ;
2. ເຄື່ອນໄຫວທີ່ຈະເປັນອັນຕະລາຍ ຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສິດເສລີພາບຂອງບຸກຄົນອື່ນ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ, ທ້ອງຖິ່ນ ແລະ ເຜົ່າຕ່າງໆ;
3. ເຄື່ອນໄຫວທີ່ນຳໄປສູ່ການແບ່ງແຍກຄວາມສາມັກຄີພາຍໃນຊາດ, ພາຍໃນທ້ອງຖິ່ນ ແລະ ເຜົ່າຕ່າງໆ;
4. ທຳລາຍຜົນປະໂຫຍດຂອງຊາດ, ຂອງລວມໝູ່ ແລະ ບຸກຄົນ;
5. ພົວພັນ ຫຼື ເຂົ້າຮ່ວມໃນການ ຟອກເງິນ ຫຼື ສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ;
6. ຮັບເອົາ ຊ່ຽວຊານ, ທີ່ປຶກສາ ແລະ ອາສາສະໝັກ ທີ່ເປັນຄົນຕ່າງປະເທດ ມາເຮັດວຽກຢູ່ມູນນິທິໂດຍບໍ່ໄດ້ຮັບອະນຸຍາດ ຈາກພາກສ່ວນທີ່ກ່ຽວຂ້ອງ;
7. ປອມແປງ, ມອບໂອນ, ໃຫ້ເຊົ່າ, ໃບອະນຸຍາດສ້າງຕັ້ງ ຫຼື ໃບທະບຽນມູນນິທິດ້ວຍຮູບການໃດກໍຕາມ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 29 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ແລະ ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຕົນ;
2. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ເວົ້າຈາບໍ່ສຸພາບ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ຮັບເອົາ, ໃຫ້, ເປັນສື່ກາງໃນການໃຫ້ ຫຼື ຮັບສິນບົນ;
4. ເມີນເສີຍ, ປະໝາດ, ເລີ່ນເລີ້ ຫຼື ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່;
5. ກົດໜ່ວງ, ຖ່ວງດຶງ ຫຼື ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງມູນນິທິ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຄຸ້ມຄອງ ແລະ ການກວດກາ ມູນນິທິ

**ມາດຕາ 30 ອົງການຄຸ້ມຄອງ ແລະ ກວດກາ ມູນນິທິ**

ອົງການຄຸ້ມຄອງ ແລະ ກວດກາ ມູນນິທິ ປະກອບດ້ວຍ:

1. ຄະນະຈັດຕັ້ງສູນກາງພັກ;
2. ຄະນະຈັດຕັ້ງນະຄອນຫຼວງ, ແຂວງ;
3. ຄະນະຈັດຕັ້ງເມືອງ, ນະຄອນ.

ຄະນະຈັດຕັ້ງສູນກາງພັກ ເປັນໃຈກາງປະສານສົມທົບກັບ ກະຊວງການເງິນ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາ ມູນນິທິ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງ ຄະນະຈັດຕັ້ງສູນກາງພັກ**

ໃນການຄຸ້ມຄອງ ແລະ ກວດກາ ມູນນິທິ ຄະນະຈັດຕັ້ງສູນກາງພັກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ, ປັບປຸງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບມູນນິທິ ເພື່ອສະເໜີໃຫ້ລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວກັບມູນນິທິ ເປັນແຜນການ, ແຜນງານ, ໂຄງການ ລະອຽດຂອງຕົນ ແລະ ແນະນຳການຈັດຕັ້ງປະຕິບັດ;
3. ໂຄສະນາເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບມູນນິທິ;
4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແຈ້ງການ, ຄູ່ມື, ແບບພິມ ກ່ຽວກັບວຽກງານມູນນິທິ;
5. ອະນຸຍາດ ສ້າງຕັ້ງ, ໂຮມ, ແຍກ, ປ່ຽນຊື່, ຍົກລະດັບ;
6. ອອກ ແລະ ຕໍ່ ທະບຽນມູນນິທິ;
7. ຍຸບເລີກ ມູນນິທິ;
8. ພິຈາລະນາ ກ່ຽວກັບການຮັບ ທຶນຂອງມູນນິທິ ຕາມລະບຽບການ;
9. ປະເມີນ, ຕິດຕາມ ແລະ ກວດກາຄວາມສ່ຽງມູນນິທິຢ່າງເປັນປົກກະຕິ ພ້ອມທັງລາຍງານ ໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ກໍລະນີພົບເຫັນການເຄື່ອນໄຫວທີ່ພົວພັນກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;
10. ແນະນຳ, ອຳນວຍຄວາມສະດວກ ເພື່ອໃຫ້ມູນນິທິເຄື່ອນໄຫວຖືກຕ້ອງຕາມຈຸດປະສົງ ແລະ ພາລະບົດບາດ ຂອງມູນນິທິ;
11. ສ້າງ, ບຳລຸງ, ຍົກລະດັບ ກ່ຽວກັບວຽກງານມູນນິທິ ໃຫ້ແກ່ພະນັກງານ - ລັດຖະກອນ ແລະ ບຸກຄະລາກອນ ຂອງມູນນິທິ;
12. ສ້າງ, ນຳໃຊ້ ແລະ ພັດທະນາ ລະບົບຖານຂໍ້ມູນຄຸ້ມຄອງມູນນິທິ ໃຫ້ມີຄວາມທັນສະໄໝ;
13. ນຳໃຊ້ມາດຕະການຕໍ່ມູນນິທິ ທີ່ລະເມີດກົດໝາຍ ແລະ ລະບຽບການ;
14. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງມູນນິທິ ລວມທັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຂອງມູນນິທິ;

15. ຕົກລົງ ຫຼື ສະເໜີ ລັດຖະບານ ພິຈາລະນາຍ້ອງຍໍ ມູນນິທິທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາ ຫຼື ຊ່ວຍເຫຼືອສັງຄົມ;

16. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງມູນນິທິ;

17. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານມູນນິທິ ຕໍ່ລັດຖະບານຢ່າງເປັນປົກກະຕິ;

18. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 32 ສິດ ແລະ ໜ້າທີ່ ຂອງ ຄະນະຈັດຕັ້ງນະຄອນຫຼວງ, ແຂວງ

ໃນການຄຸ້ມຄອງ ແລະ ກວດກາ ມູນນິທິ ຄະນະຈັດຕັ້ງ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານມູນນິທິ;

2. ໂຄສະນາເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບມູນນິທິ;

3. ປະເມີນ, ຕິດຕາມ ແລະ ກວດກາຄວາມສ່ຽງມູນນິທິຢ່າງເປັນປົກກະຕິ ພ້ອມທັງລາຍງານ ໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ກໍລະນີພົບເຫັນການເຄື່ອນໄຫວທີ່ພົວພັນກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

4. ແນະນຳ, ອຳນວຍຄວາມສະດວກ ເພື່ອໃຫ້ມູນນິທິເຄື່ອນໄຫວຖືກຕ້ອງ ຕາມຈຸດປະສົງ ແລະພາລະບົດບາດ ຂອງມູນນິທິ;

5. ສະເໜີ ສ້າງ, ບຳລຸງ, ຍົກລະດັບ ໃຫ້ແກ່ ພະນັກງານ-ລັດຖະກອນ ແລະ ບຸກຄະລາກອນ ກ່ຽວກັບວຽກງານມູນນິທິ;

6. ຄຸ້ມຄອງ ແລະ ນຳໃຊ້ ລະບົບຖານຂໍ້ມູນຄຸ້ມຄອງມູນນິທິ;

7. ນຳໃຊ້ມາດຕະການຕໍ່ມູນນິທິ ທີ່ລະເມີດກົດໝາຍ ແລະ ລະບຽບການ;

8. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງມູນນິທິ ລວມທັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຂອງມູນນິທິ;

9. ປະສານສົມທົບກັບ ພະແນກ, ອົງການທຽບເທົ່າພະແນກຂອງ ນະຄອນຫຼວງ, ແຂວງ ແລະ ຄະນະກຳມະການປົກຄອງເມືອງ, ນະຄອນ ກ່ຽວກັບວຽກງານມູນນິທິ;

10. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານມູນນິທິ ຕໍ່ຄະນະຈັດຕັ້ງສູນກາງພັກ ແລະ ຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 33 ສິດ ແລະ ໜ້າທີ່ ຂອງຄະນະຈັດຕັ້ງເມືອງ, ນະຄອນ

ໃນການຄຸ້ມຄອງ ແລະ ກວດກາ ມູນນິທິ ຄະນະຈັດຕັ້ງເມືອງ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານມູນນິທິ;

2. ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບມູນນິທິ;

3. ຕິດຕາມ ແລະ ກວດກາຄວາມສ່ຽງມູນນິທິຢ່າງເປັນປົກກະຕິ ພ້ອມທັງລາຍງານ ໃຫ້ສໍານັກງານຂໍ້ມູນຕ້ານການຟອກເງິນ ກໍລະນີພົບເຫັນການເຄື່ອນໄຫວທີ່ພົວພັນກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

4. ແນະນໍາ, ອໍານວຍຄວາມສະດວກ ເພື່ອໃຫ້ມູນນິທິເຄື່ອນໄຫວຖືກຕ້ອງ ຕາມຈຸດປະສົງ ແລະ ພາລະບົດບາດ ຂອງມູນນິທິ;

5. ນໍາໃຊ້ ລະບົບຖານຂໍ້ມູນຄຸ້ມຄອງມູນນິທິ;

6. ນໍາໃຊ້ມາດຕະການຕໍ່ມູນນິທິ ທີ່ລະເມີດກົດໝາຍ ແລະ ລະບຽບການ;

7. ຮັບ ແລະ ພິຈາລະນາແກ້ໄຂຄໍາສະເໜີຂອງມູນນິທິ ລວມທັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານຂອງມູນນິທິ;

8. ປະສານສົມທົບກັບ ຫ້ອງການ, ອົງການທຽບເທົ່າຫ້ອງການຂອງ ເມືອງ, ນະຄອນ ແລະ ຄະນະກໍາມະການປົກຄອງຕາແສງ ກ່ຽວກັບວຽກງານມູນນິທິ;

9. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານມູນນິທິ ຕໍ່ ຄະນະຈັດຕັ້ງນະຄອນຫຼວງ, ແຂວງ ແລະ ຄະນະກໍາມະການປົກຄອງເມືອງ, ນະຄອນ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 34 ສິດ ແລະ ໜ້າທີ່ຂອງກະຊວງການເງິນ

ກະຊວງການເງິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະສານສົມທົບກັບ ຄະນະຈັດຕັ້ງສູນກາງພັກ, ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການອອກລະບຽບການໃນການຄຸ້ມຄອງການເງິນຂອງມູນນິທິ ເພື່ອຈັດຕັ້ງປະຕິບັດ;

2. ຕິດຕາມ ກວດກາ ການເຄື່ອນໄຫວການເງິນຂອງມູນນິທິ;

3. ຮັບ ແລະ ພິຈາລະນາ ແກ້ໄຂຄໍາຮ້ອງຂອງມູນນິທິ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບການເຄື່ອນໄຫວວຽກງານການເງິນຂອງມູນນິທິ;

4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 35 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ

ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາ ແລະ ຢັ້ງຢືນ ຄວາມຖືກຕ້ອງ ກ່ຽວກັບປະຫວັດ ຜູ້ລິເລີ່ມ ແລະ ເປົ້າໝາຍຄະນະບໍລິຫານຂອງມູນນິທິ;

2. ພິຈາລະນາ ຄັດ ແລະ ຕິດຕາມ ກວດກາ ກ່ຽວກັບການນໍາໃຊ້ ຕາປະທັບມູນນິທິ;

3. ຕິດຕາມ ກວດກາ ການເຄື່ອນໄຫວຂອງມູນນິທິ;

4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 36 ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ

ກະຊວງການຕ່າງປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ ກ່ຽວກັບການຮັບ ທຶນ ຈາກຕ່າງປະເທດ ຂອງມູນນິທິ ຕາມລະບຽບການ;

2. ອະນຸຍາດໃຫ້ ຊ່ຽວຊານ, ທີ່ປຶກສາ ແລະ ອາສາສະໝັກ ທີ່ເປັນຄົນຕ່າງປະເທດ ມາເຮັດວຽກໃນມູນນິທິ ແລະ ຜູ້ໃຫ້ທຶນ ມາຕິດຕາມໂຄງການຂອງມູນນິທິ;

3. ປະສານກັບກະຊວງ, ອົງການ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຕິດຕາມ ແຜນງານ, ໂຄງການຂອງມູນນິທິ ທີ່ກະຊວງການຕ່າງປະເທດ ອະນຸມັດຮັບທຶນ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 37 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມື ກັບຄະນະຈັດຕັ້ງສູນກາງພັກ ໃນການຄຸ້ມຄອງ ແລະ ກວດກາ ວຽກງານມູນນິທິ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 38 ເນື້ອໃນການກວດກາ**

ການກວດກາວຽກງານມູນນິທິ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ, ລະບຽບການ ແລະ ກົດລະບຽບຂອງມູນນິທິ;
2. ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງມູນນິທິ;
3. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ.

**ມາດຕາ 39 ຮູບການການກວດກາ**

ການກວດກາວຽກງານມູນນິທິ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນຕາມແຜນການຢ່າງເປັນປະຈຳ ແລະມີການກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ;

3. ການກວດກາກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ.

ໃນການດຳເນີນການກວດກາມູນນິທິ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 40 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 41 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

ສຳລັບມາດຕະການປັບໃໝ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 42 ການຈັດຕັ້ງປະຕິບັດ**

ຄະນະຈັດຕັ້ງສູນກາງພັກ ເປັນເຈົ້າການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 43 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 10 ຕຸລາ 2025 ເປັນຕົ້ນໄປ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍມູນນິທິ ສະບັບເລກທີ 149/ນຍ, ລົງວັນທີ 19 ພຶດສະພາ 2011.

ຕາງໜ້າລັດຖະບານແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ